ດ່ວນທີ່ສຸດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

*******************

**ກະຊວງການເງິນ** ເລກທີ 2680/ກງ

ນະຄອນຫລວງວຽງຈັນ, ວັນທີ 13 SEP 2013

## ຄຳສັ່ງແນະນຳ

ເຖິງ: ບັນດາທ່ານຫົວໜ້າພະແນກການເງິນປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ.

ເລື່ອງ: ການເບີກຈ່າຍເງິນເດືອນ ແລະ ເງິນນະໂຍບາຍ ສົກປີ 2012-2013.

-ອີງຕາມຄຳແນະນຳຂອງລັດຖະມົນຕີວ່າການກະຊວງການເງິນສະບັບເລກທີ 3100/ກງ, ລົງວັນທີ 01 ພະຈິກ 2012 ວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2012-2013.

-ອີງຕາມທິດຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 06 ກັນຍາ 2013 ກ່ຽວກັບການຈັດຕັ້ງປະຕິບັດງົບປະມານ ສົກປີ 2012-2013.

ໃນໄລຍະຜ່ານມາ ການເບີກຈ່າຍເງິນເດືອນພະນັກງານ, ທະຫານ, ຕຳຫຼວດ ແລະ ພະນັກງານບຳນານ ໃນຂອບເຂດທົ່ວປະເທດ ມີຄວາມຊັກຊ້າ ແກ່ຍາວ ອັນເນື່ອງມາຈາກການເກັບລາຍຮັບບໍ່ໄດ້ຕາມຄາດໝາຍ ແລະ ບໍ່ທັນຖືເອົາການເບີກຈ່າຍເງິນເດືອນເປັນບຸລິມະສິດ ຢ່າງແທ້ຈິງ ເພື່ອແກ້ໄຂບັນຫາດັ່ງກ່າວ:

**ລັດຖະມົນຕີວ່າການກະຊວງການເງິນ ອອກຄຳສັ່ງແນະນຳ ດັ່ງນີ້:**

1. ໃຫ້ພະແນກການເງິນແຂວງ, ນະຄອນຫຼວງ ເປັນເຈົ້າການປະສານສົມທົບກັບຂະແໜງລາຍຮັບຢູ່ແຂວງ ແລະ ນະຄອນຫຼວງ ຄົ້ນຄວ້າມາດຕະການເລັ່ງທວງເກັບລາຍຮັບໃຫ້ໄດ້ຕາມແຜນ ຫຼື ລື່ນແຜນການ; ໃຫ້ນຳສະເໜີທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແຕ່ງຕັ້ງຄະນະສະເພາະກິດດຳເນີນການເລັ່ງທວງເກັບລາຍຮັບໃນເດືອນສຸດທ້າຍຂອງສົກປີ2012-2013. ລາຍຮັບທີ່ເກັບໄດ້ໃນເດືອນ

ກັນຍາ 2013 ນີ້ ແມ່ນໃຫ້ສຸມໃສ່ການເບີກຈ່າຍເງິນເດືອນ, ເງິນນະໂຍບາຍເປັນບຸລິມະສິດອັນດັບໜຶ່ງ; ສ່ວນລາຍຈ່າຍພາກອື່ນໆ ໃຫ້ເບີກຈ່າຍຕາມຄວາມເໝາະສົມ.

2. ໃຫ້ກະຊວງມາດຕະການຂຸດຄົ້ນ ຈັດເກັບລາຍຮັບ ໃນສົກປີ2013-2014, ເພີ່ມທະວີຄວາມເຂັ້ມງວດ ໃນການເກັບລາຍຮັບ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ອັດຊ່ອງຫວ່າງການຮົ່ວໄຫລ ນັບແຕ່ຕົ້ນສົກປີເປັນຕົ້ນໄປ.

3. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງການເງິນ

ກະຊວງການເງິນ ລັດຖະມົນຕີ

ພູເພັດ ຄຳພູນວົງ